ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-------------------------------------

ສຳນັກງານນາຍົກລັດຖະມົນຕີ

ເລກທີ 119 /ນຍ.
ນະຄອນຫຼວງວຽງຈັນ, ວັນທີ 26.08.2004.

# ດຳລັດ
## ກ່ຽວກັບ ການຈັດຕັ້ງປະຕິບັດ ລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍ ການໃຫ້ນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ເລກທີ 01/ສປປ

- ອີງຕາມກົດໝາຍວ່າດ້ວຍລັດຖະບານແຫ່ງ ສປປ ລາວ ສະບັບເລກທີ 02/ສພຊ, ລົງວັນທີ 26 ພຶດສະພາ 2004;
- ອີງຕາມລັດຖະບັນຍັດຂອງປະທານປະເທດແຫ່ງ ສປປ ລາວ ສະບັບເລກທີ01/ສປປ, ລົງວັນທີ 05 ມິຖຸນາ 2003 ວ່າດ້ວຍ ການໃຫ້ນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ;
- ອີງຕາມເອກະສານສະເໜີຂອງ ທ່ານປະທານຄະນະກຳມະການແຜນການ ແລະ ການຮ່ວມມື ສະບັບເລກທີ 352/ຄຜຮ, ລົງວັນທີ 20 ເມສາ 2004, (ຕໍ່ໄປນີ້ເອີ້ນວ່າ " ຄະນະກຳມະການແຜນການ ແລະ ການລົງທຶນ " ຕາມດຳລັດ ເລກທີ 118/ນຍ ລົງວັນທີ 24/08/2004).

**ນາຍົກລັດຖະມົນຕີ ອອກດຳລັດ:**

## ພາກທີ I
## ບົດບັນຍັດທົ່ວໄປ

ມາດຕາ 1. ດຳລັດສະບັບນີ້ ກຳນົດລະອຽດ ການຈັດຕັ້ງປະຕິບັດ ລັດຖະບັນຍັດ ຂອງປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01/ສປປ, ລົງວັນທີ 05 ມິຖຸນາ 2003 ວ່າດ້ວຍ ການໃຫ້ນະໂຍບາຍສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ເພື່ອສ້າງສະພາບແວດລ້ອມ ແລະ ເງື່ອນໄຂເອື້ອອຳນວຍທີ່ດີ ແນໃສ່ກະຕຸກຊຸກຍູ້ ດຶງດູດ ແລະສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ໃຫ້ຂະຫຍາຍຕົວເປັນກ້າວໆ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ຢູ່ ສປປ ລາວ.

ມາດຕາ 2. ວິສາຫະກິດການລົງທຶນພາຍໃນ ແລະ ວິສາຫະກິດການລົງທຶນຕ່າງປະເທດ ທີ່ຈະໄດ້ຮັບໃບສົ່ງເສີມການລົງທຶນພາຍໃນ ແລະ ໃບອະນຸຍາດລົງທຶນຕ່າງປະເທດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍທຸລະກິດຂອງ ສປປ ລາວ, ຫລັງຈາກດຳລັດສະບັບນີ້ ມີຜົນບັງຄັບໃຊ້, ມີສິດໄດ້ຮັບ

ນະໂຍບາຍສົ່ງເສີມການລົງທຶນ ໂດຍສອດຄ່ອງກັບເງື່ອນໄຂການໃຫ້ນະໂຍບາຍຕ່າງໆ ຕາມລັດຖະບັນຍັດ ສະບັບເລກທີ 01/ສປປ, ລົງວັນທີ 05 ມິຖຸນາ 2003.

ການລົງທຶນພາຍໃນ ແລະ ການລົງທຶນຕ່າງປະເທດ ຕ້ອງແມ່ນໂຄງການລົງທຶນໃສ່ ບັນດາກິດຈະການຕ່າງໆ ຕາມບັນຊີກິດຈະການສົ່ງເສີມການລົງທຶນ ທີ່ໄດ້ກຳນົດໄວ້ ຢູ່ໃນເອກະສານຄັດຕິດໝາຍເລກ 2 ຂອງລັດຖະບັນຍັດດັ່ງກ່າວ ຫລື ໂຄງການທີ່ມີສັນຍາກັບລັດຖະບານແຫ່ງ ສປປ ລາວ. ໂຄງການລົງທຶນດັ່ງກ່າວ ຕ້ອງນຳໃຊ້ຊັບສິນໃໝ່ ຫລື ນຳໃຊ້ຊັບສິນທີ່ມີຢູ່ ແຕ່ໃນເປົ້າໝາຍກິດຈະການໃໝ່.

ສຳລັບວິສາຫະກິດການລົງທຶນພາຍໃນ ແລະ ວິສາຫະກິດການລົງທຶນຕ່າງປະເທດ ທີ່ໄດ້ຮັບໃບສົ່ງເສີມການລົງທຶນພາຍໃນ ແລະ ໃບອະນຸຍາດລົງທຶນຕ່າງປະເທດ ແລະ ຈົດທະບຽນຖືກຕ້ອງຕາມກົດໝາຍທຸລະກິດຂອງ ສປປ ລາວ ກ່ອນໜ້ານີ້ ແມ່ນປະຕິບັດຕາມກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບເລກທີ 03/95/ສພຊ, ລົງວັນທີ 14 ຕຸລາ 1995 ແລະ ກົດໝາຍວ່າດ້ວຍການສົ່ງເສີມ ແລະຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 01/94, ລົງວັນທີ 14 ມີນາ 1994.

**ມາດຕາ 3.** ສຳລັບວິສາຫະກິດການລົງທຶນພາຍໃນ, ຄະນະກຳມະການແຜນການ ແລະ ການລົງທຶນໃຫ້ນະໂຍບາຍສົ່ງເສີມການລົງທຶນ ໂດຍອີງໃສ່ເງື່ອນໄຂຂອງເຂດ, ກິດຈະການ ແລະ ທຶນຈົດທະບຽນ ບໍ່ຕ່ຳກວ່າ 01 ຕື້ກີບ.

**ມາດຕາ 4.** ວິສາຫະກິດການລົງທຶນພາຍໃນ ທີ່ໄດ້ຮັບໃບສົ່ງເສີມການລົງທຶນພາຍໃນ ແລະວິສາຫະກິດການລົງທຶນຕ່າງປະເທດ ທີ່ໄດ້ຮັບໃບອະນຸຍາດລົງທຶນຕ່າງປະເທດ ຫາກມີຈຸດປະສົງ ຢາກຂໍນະໂຍບາຍສົ່ງເສີມການລົງທຶນ ຕ້ອງປະກອບສຳນວນເອກະສານຍື່ນຕໍ່ຄະນະກຳມະການແຜນການ ແລະ ການລົງທຶນ ເພື່ອຄົ້ນຄວ້າພິຈາລະນາ.

**ມາດຕາ 5.** ພາຍຫລັງໄດ້ຮັບສຳນວນເອກະສານ ຂໍນະໂຍບາຍສົ່ງເສີມການລົງທຶນ ຢ່າງຄົບຖ້ວນແລ້ວ, ຄະນະກຳມະການແຜນການ ແລະການລົງທຶນ ຈະໄດ້ຄົ້ນຄວ້າ ແລະ ຕອບໃຫ້ຜູ້ລົງທຶນຊາບ ພາຍໃນ 15 ວັນລັດຖະການ ນັບແຕ່ມື້ ໄດ້ຮັບສຳນວນເອກະສານ ດັ່ງກ່າວ.

## ພາກທີ II
## ນະໂຍບາຍສົ່ງເສີມການລົງທຶນ

**ມາດຕາ 6.** ລັດຖະບັນຍັດໄດ້ປັບປຸງນະໂຍບາຍເສັຍພາສີ ແລະ ອາກອນນຳເຂົ້າ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) ຈາກອັດຕາ 1% ສຳລັບ:

- ວັດຖຸອຸປະກອນ ສຳລັບ ການກໍ່ສ້າງໂຮງງານ, ເຄື່ອງຈັກທຳການຜະລິດ.
- ວັດຖຸດິບ ແລະ ຜະລິດຕະພັນເຄິ່ງສຳເລັດຮູບ.
- ອຸປະກອນ ແລະ ອາໄຫລ່ເຄື່ອງຈັກ.
- ອຸປະກອນຮັບໃຊ້ ທີ່ເປັນຊັບສົມບັດຄົງທີ່, ແລະ

- ລົດຮັບໃຊ້ການຜະລິດໂດຍກົງ,

ມາເປັນຍົກເວັ້ນພາສີ ແລະ ອາກອນນຳເຂົ້າ, ຊຶ່ງມີເງື່ອນໄຂລະອຽດ ກຳນົດໄວ້ຢູ່ໃນມາດຕາ 8, 9, 10, 11 ແລະ 12 ຂອງລັດຖະບັນຍັດດັ່ງກ່າວ. ສ່ວນຈຳນວນ ແລະ ບໍລິມາດ ທີ່ຈະໄດ້ຮັບອະນຸຍາດນຳເຂົ້າ ຕ້ອງສອດຄ່ອງກັບ ຄວາມຕ້ອງການຕົວຈິງຂອງວຽກງານ ແລະ ແຜນການທຸລະກິດຂອງວິສາຫະກິດ.

ມາດຕາ 7. ສຳລັບລົດຮັບໃຊ້ການຜະລິດທາງອ້ອມ ຫລື ລົດຮັບໃຊ້ວຽກບໍລິຫານ, ຊຶ່ງປະກອບມີ: ລົດເກັ໋ງ, ລົດຈິບ, ລົດກະບະ ແລະ ລົດຕູ້ 07 ບ່ອນນັ່ງລົງມາ, ຄະນະກຳມະການແຜນການ ແລະ ການລົງທຶນ ຈະພິຈາລະນາອະນຸຍາດນຳເຂົ້າ ໂດຍໃຫ້ເສັຍພາສີ ແລະອາກອນ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) 1% ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 13 ຂອງລັດຖະບັນຍັດ ຫລື ຕາມທີ່ໄດ້ລະບຸໄວ້ຢູ່ໃນສັນຍາ ກັບລັດຖະບານແຫ່ງ ສປປ ລາວ.

ວິສາຫະກິດການລົງທຶນ ທີ່ຈະໄດ້ຮັບນະໂຍບາຍດັ່ງກ່າວ ຕາມມາດຕານີ້ ຕ້ອງໄດ້ຈົດທະບຽນຖືກຕ້ອງ ຕາມກົດໝາຍວ່າດ້ວຍທຸລະກິດ ແລະ ໄດ້ດຳເນີນການເຄື່ອນໄຫວທຸລະກິດຢ່າງເປັນທາງການແລ້ວ ຢ່າງນ້ອຍ 03 ເດືອນ. ນອກຈາກນັ້ນ, ວິສາຫະກິດດັ່ງກ່າວ ຕ້ອງໄດ້ນຳທຶນເຂົ້າເປັນຊັບສິນຄົງທີ່ ແລະ ທຶນໝູນວຽນ ບໍ່ໃຫ້ຫລຸດເຄິ່ງໜຶ່ງ ຂອງທຶນຈົດທະບຽນ ໂດຍມີການຢັ້ງຢືນການນຳເຂົ້າທຶນ ຈາກທະນາຄານແຫ່ງ ສປປ ລາວ.

ວິສາຫະກິດ ທີ່ໄດ້ຮັບນະໂຍບາຍນຳເຂົ້າລົດບໍລິຫານມາກ່ອນແລ້ວ ກໍຈະໄດ້ຮັບນະໂຍບາຍນຳລົດບໍລິຫານເຂົ້າມາທົດແທນຄັນເກົ່າ ທີ່ມີອາຍຸການນຳເຂົ້າຢ່າງຕ່ຳ 05 ປີ ຕາມເງື່ອນໄຂທີ່ໄດ້ກຳນົດໄວ້ ຢູ່ໃນມາດຕາ 15 ຂອງລັດຖະບັນຍັດດັ່ງກ່າວ. ສຳລັບລົດຄັນເກົ່ານັ້ນ ວິສາຫະກິດຕ້ອງໄດ້ຂາຍອອກ ແລະ ເສັຍພາສີ ແລະ ອາກອນ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) ຕາມລະບຽບການ.

ມາດຕາ 8. ບັນດາວິສາຫະກິດ ທີ່ດຳເນີນກິດຈະການ ດ້ານການບໍລິການຕ່າງໆ ຈະໄດ້ຮັບນະໂຍບາຍນຳເຂົ້າລົດ ດ້ວຍການເສັຍພາສີ-ອາກອນ ໃນອັດຕາຫລຸດຜ່ອນ ດັ່ງນີ້:

ກ. ກິດຈະການໂຮງແຮມ:

ການນຳເຂົ້າລົດຕູ້ 08 ບ່ອນນັ່ງຂຶ້ນໄປ ແລະ ສະພາບເຕັກນິກໃໝ່ 100% ດ້ວຍການເສັຍພາສີ ແລະ ອາກອນນຳເຂົ້າ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້ ໃນອັດຕາ 20% ຂອງລາຄາ CIF (ຫລື ລາຄາກາງ) ນຳເຂົ້າລົດ ທີ່ກະຊວງການຄ້າກຳນົດອອກ ໃນແຕ່ລະໄລຍະ.

**ສ່ວນຈຳນວນ ລົດ ທີ່ຈະໄດ້ຮັບອະນຸຍາດ ມີດັ່ງນີ້:**

- ໂຮງແຮມ ທີ່ມີຫ້ອງນອນແຕ່ 15 ຫາ 50 ຫ້ອງ ໄດ້ຮັບອະນຸຍາດ 01 ຄັນ.
- ໂຮງແຮມ ທີ່ມີຫ້ອງນອນແຕ່ 51 ຫາ 100 ຫ້ອງ ໄດ້ຮັບອະນຸຍາດ 02 ຄັນ.
- ໂຮງແຮມ ທີ່ມີຫ້ອງນອນແຕ່ 101 ຫ້ອງ ຂຶ້ນໄປ ໄດ້ຮັບອະນຸຍາດ 03 ຄັນ.

ຂ. ກິດຈະການທ່ອງທ່ຽວ:

ການນຳເຂົ້າລົດຕູ້ 08 ບ່ອນນັ່ງຂຶ້ນໄປ ແລະ ສະພາບເຕັກນິກໃໝ່ 100% ດ້ວຍການເສັຍພາສີ ແລະ ອາກອນນຳເຂົ້າ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) ໃນອັດຕາ

30% ຂອງລາຄາ CIF (ຫລື ລາຄາກາງ) ນຳເຂົ້າລົດ ທີ່ກະຊວງການຄ້າ ກຳນົດອອກໃນແຕ່ລະໄລຍະ. ຈຳນວນລົດ ທີ່ຈະໄດ້ຮັບອະນຸຍາດນຳເຂົ້າ ແມ່ນອີງໃສ່ທຶນຈົດທະບຽນຂອງບໍລິສັດ ບໍ່ໃຫ້ຕ່ຳກວ່າ 200.000 ໂດລາສະຫະລັດ ຕາມລະບຽບການສ້າງຕັ້ງບໍລິສັດບໍລິການທ່ອງທ່ຽວ ແລະ ໄດ້ຮັບອະນຸຍາດລົດຕູ້ 12-15 ບ່ອນນັ່ງ 01 (ໜຶ່ງ) ຄັນ.

ຄ. **ກິດຈະການແທັກຊີ ຫລື ລົດໃຫ້ເຊົ່າ:**

ການນຳເຂົ້າລົດປະເພດຕ່າງໆ ໃໝ່ 100% ດ້ວຍການເສັຍພາສີ ແລະ ອາກອນນຳເຂົ້າ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) ໃນອັດຕາ 30% ຂອງລາຄາ CIF (ຫລື ລາຄາກາງ) ນຳເຂົ້າລົດ ທີ່ກະຊວງການຄ້າ ກຳນົດອອກໃນແຕ່ລະໄລຍະ.

ສ່ວນຈຳນວນລົດທີ່ຈະໄດ້ຮັບອະນຸຍາດ ແມ່ນເອົາລາຄາຂອງລົດແຕ່ລະຄັນ ທີ່ຈະນຳເຂົ້ານັ້ນ ມາບວກກັນທັງໝົດ ບໍ່ໃຫ້ກາຍທຶນຈົດທະບຽນຂອງວິສາຫະກິດ.

ງ. **ກິດຈະການກົນຈັກໜັກໃຫ້ເຊົ່າ:**

ການນຳເຂົ້າກົນຈັກໜັກປະເພດຕ່າງໆ ຕາມມາດຖານເຕັກນິກ ບໍ່ໃຫ້ຫລຸດ 80% ທີ່ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ວາງອອກ ດ້ວຍການເສັຍພາສີ ແລະ ອາກອນນຳເຂົ້າ (ລວມທັງອາກອນຕົວເລກທຸລະກິດ, ອາກອນຊົມໃຊ້) ໃນອັດຕາ 01% ຂອງມູນຄ່ານຳເຂົ້າ. ສ່ວນຈຳນວນກົນຈັກໜັກ ທີ່ຈະໄດ້ຮັບອະນຸຍາດ ແມ່ນອີງໃສ່ຂະໜາດ, ທຶນຈົດທະບຽນ, ບົດວິພາກເສດຖະກິດ-ເຕັກນິກ ແລະ ແຜນການນຳໃຊ້ຕົວຈິງ ຂອງວິສາຫະກິດ.

ມາດຕາ 9. ລັດຖະບັນຍັດ ໄດ້ປັບປຸງອັດຕາອາກອນກຳໄລ ຂອງວິສາຫະກິດ ຢູ່ໃນກົດໝາຍວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດ ຢູ່ ສປປ ລາວ ສະບັບເລກທີ 01/94, ລົງວັນທີ 14 ມີນາ 1994, ຈາກອັດຕາ 20% ມາເປັນອັດຕາຍົກເວັ້ນ ແລະ ຫລຸດຜ່ອນ ຕາມເຂດລົງທຶນ ໂດຍອີງຕາມເງື່ອນໄຂ ທີ່ໄດ້ລະບຸຢູ່ໃນຂໍ້ I, ມາດຕາ 17 ຂອງລັດຖະບັນຍັດ.

ລັດຖະບັນຍັດ ໄດ້ປັບປຸງອັດຕາອາກອນກຳໄລ ຂອງວິສາຫະກິດ ຢູ່ໃນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນພາຍໃນ ສະບັບ ເລກທີ03/95/ສພຊ, ລົງວັນທີ 14/10/1995 ມາເປັນອັດຕາຍົກເວັ້ນ ແລະ ຫລຸດຜ່ອນ ຕາມເຂດລົງທຶນ ໂດຍອີງຕາມເງື່ອນໄຂ ທີ່ໄດ້ລະບຸຢູ່ໃນ ຂໍ້ II, ມາດຕາ 17 ຂອງລັດຖະບັນຍັດ.

ສ່ວນການຍົກເວັ້ນ ແລະ ຫລຸດຜ່ອນດັ່ງກ່າວນັ້ນ ໃຫ້ນັບແຕ່ມື້ເລີ່ມຕົ້ນດຳເນີນການຜະລິດທຸລະກິດ ເປັນຕົ້ນໄປ ແລະ ຈະໃຫ້ນະໂຍບາຍສະເພາະແຕ່ ບັນດາວິສາຫະກິດ ທີ່ໄດ້ຮັບໃບສົ່ງເສີມການລົງທຶນພາຍໃນ ຫລື ໃບອະນຸຍາດລົງທຶນຕ່າງປະເທດ ພາຍຫລັງລັດຖະບັນຍັດ ສະບັບເລກທີ 01/ສປປ, ລົງວັນທີ 5/ 6/ 2003 ມີຜົນບັງຄັບໃຊ້ເປັນຕົ້ນໄປ.

ໃນໄລຍະທີ່ໄດ້ຮັບການຍົກເວັ້ນອາກອນກຳໄລນັ້ນ ກໍຈະໄດ້ຮັບການຍົກເວັ້ນອາກອນຕ່ຳສຸດເຊັ່ນກັນ.

## ພາກທີ III
## ການຈັດຕັ້ງປະຕິບັດ

ມາດຕາ 10. ມອບໃຫ້ ຄະນະກຳມະການແຜນການ ແລະ ການລົງທຶນ ພິຈາລະນາຕົກລົງໃຫ້ນະໂຍບາຍດ້ານພາສີ ແລະ ອາກອນນຳເຂົ້າວັດຖຸດິບ, ວັດຖຸອຸປະກອນ, ເຄື່ອງຈັກທຳການຜະລິດ, ພາຫານະຮັບໃຊ້ການຜະລິດໂດຍກົງ, ລົດຮັບໃຊ້ບໍລິຫານ ແລະ ອາກອນກຳໄລ ຕາມມາດຕາ 8, 9, 10, 11, 12, 13, 14, 15, 16 ແລະ 17 ຂອງລັດຖະບັນຍັດດັ່ງກ່າວ ລວມທັງການພິຈາລະນາແບ່ງຄວາມຮັບຜິດຊອບ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ. ທຸກການຕົກລົງ ກ່ຽວກັບການໃຫ້ນະໂຍບາຍສົ່ງເສີມການລົງທຶນດ້ານພາສີ-ອາກອນ ຈະຕ້ອງມີຄຳເຫັນດີຈາກກະຊວງການເງິນ.

ມາດຕາ 11. ມອບໃຫ້ຄະນະກຳມະການແຜນການ ແລະ ການລົງທຶນ ສົມທົບກັບ ກະຊວງ, ຂະແຫນງການທີ່ກ່ຽວຂ້ອງ ແລະ ທ້ອງຖິ່ນ ແນະນຳວິທີການລະອຽດ ກ່ຽວກັບການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ.

ມາດຕາ 12. ມອບໃຫ້ ກະຊວງການເງິນ, ກະຊວງການຄ້າ, ກະຊວງຄົມມະນາຄົມ ຂົນສົ່ງ ໄປສະນີ ແລະ ກໍ່ສ້າງ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ ປັບປຸງກົນໄກ, ວິທີການ ແລະ ລະບຽບການທີ່ກ່ຽວຂ້ອງຂອງຕົນ ກ່ຽວກັບ ການຈັດຕັ້ງປະຕິບັດ ດຳລັດສະບັບດັ່ງກ່າວ ໃຫ້ຈະແຈ້ງ ລະຫວ່າງ ສູນກາງ ແລະ ທ້ອງຖິ່ນ.

ມາດຕາ 13. ພະແນກແຜນການ ແລະ ການລົງທຶນແຂວງ ຕ້ອງສະຫລຸບສັງລວມສະພາບ, ຂໍ້ສະດວກ ແລະ ຂໍ້ຫຍຸ້ງຍາກ ໃນການຈັດຕັ້ງປະຕິບັດດຳລັດສະບັບດັ່ງກ່າວ ແລະ ລາຍງານໃຫ້ຄະນະກຳມະການແຜນການ ແລະ ການລົງທຶນຊາບ ຢ່າງເປັນລະບົບປົກກະຕິ ທຸກໆ 3 ເດືອນ.

ມາດຕາ 14. ຄະນະກຳມະການແຜນການ ແລະ ການລົງທຶນ ມີຫນ້າທີ່ຕິດຕາມ, ກວດກາການຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນປົກກະຕິ.

ມາດຕາ 15. ດຳລັດສະບັບນີ້ ມີຜົນບັງຄັບໃຊ້ ຫລັງຈາກ 45 ວັນ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**